ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
**********************

ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ
ຖະໜົນໄກສອນພົມວິຫານ ບ້ານໂພນພະເນົາ
ນະຄອນຫຼວງວຽງຈັນ, ສ.ປ.ປ.ລາວ
ຕູ້ ປ.ນ: 4596
ໂທ: (856-21) 453312,720456
ແຟກ: (856-21) 452580

ເລກທີ 0263 --- ສຄອ/ພທວ-ພຊງ

ນະຄອນຫຼວງວຽງຈັນ,ລົງວັນທີ 02 MAR 2018

**ເຖິງ:** ບັນດາທ່ານ ທີ່ມີຄວາມສົນໃຈຢາກເປັນຜູ້ປະກອບກິດຈະການ ແລະ ຮຽນຮູ້ກ່ຽວກັບການສ້າງແຜນດຳເນີນທຸລະກິດ.

**ເລື່ອງ:** ເຊີນເຂົ້າຮ່ວມສຳມະນາ ຈຸດປະກາຍຝັນໃນການເປັນຜູ້ປະກອບກິດຈະການໃຫ້ປະກົດຜົນເປັນຈິງພາຍໃຕ້ຫົວຂໍ້ : ການລິເລີ່ມແນວຄວາມຄິດສ້າງທຸລະກິດ ແລະ ການຂຽນແຜນທຸລະກິດ ( **Let's have a dream as entrepreneur, Topic : To think about business start-up and how to make a business plan**), ໃນວັນທີ 16/03/2018 ທີ່ ສູນການຄ້າລາວໄອເຕັກ.

- ອີງຕາມການຮ່ວມມື ລະຫວ່າງ ສຄອ ແຫ່ງຊາດລາວ ແລະ ອົງການ Japan International Cooperation Agency (JICA) ໃນການຈັດສຳມະນາເພື່ອສ້າງຄວາມຂີດສາມາດໃຫ້ຄົນຮຸ່ນໃໝ່ ທີ່ ມີຝັນຢາກເປັນຜູ້ປະກອບກິດຈະການໃຫ້ປະກົດຜົນເປັນຈິງ.

ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ, ໃນນາມອົງກອນຈັດຕັ້ງສູງສຸດ ຂອງ ພາກທຸລະກິດລາວກໍ່ອົງການຕ່າງໜ້າຜູ້ໃຊ້ແຮງງານ, ຂໍຖືເປັນກຽດຮຽນເຊີນມາຍັງເຊີນທ່ານ ອຳນວຍການບໍລິສັດ ແລະ ສະມາຊິກ ຂອງ ສຄອ ແຫ່ງຊາດລາວ ທີ່ມີ ມີຄວາມສົນໃຈຢາກສ້າງຜູ້ສືບທອດທຸລະກິດຂອງທ່ານ ເພື່ອ ເຂົ້າຮ່ວມງານສຳມະນາ ຈຸດປະກາຍຝັນໃນການເປັນຜູ້ປະກອບກິດຈະການໃຫ້ປະກົດຜົນເປັນຈິງພາຍໃຕ້ຫົວຂໍ້ : ການລິເລີ່ມແນວຄວາມຄິດສ້າງທຸລະກິດ ແລະ ການຂຽນແຜນທຸລະກິດ ( **Let's have a dream as entrepreneur, Topic : to think about business start-up and how to make a business plan)** ໃນວັນທີ 16/03/2018, ເວລາ 13.00 ໂມງ ຫາ 16.30 ໂມງ ທີ່ ສູນການຄ້າລາວໄອເຕັກ.

ຈຸດປະສົງຂອງການຝຶກອົບຮົມ :

- ຈຸດປະກາຍແນວຄວາມຄິດໃຫ້ຄົນຮຸ່ນໃໝ່ ທີ່ຢາກເປັນຜູ້ປະກອບກິດຈະການ(Let's think about what a business is)
- ແນວຄວາມຄິດກ່ຽວກັບລາຍລະອຽດ ແລະ ເນື້ອຫາໃນການດຳເນີນທຸລະກິດ (Let's try to think about business contents)
- ວິການສ້າງແຜນດຳເນີນທຸລະກິດ (Let's think about how to make a business plan)
- ແລະ ຮັບຟັງແນວທາງ ແລະ ມູນຂ່າວສານຕ່າງໆໃນການດຳເນີນທຸລະກິດ, ໂດຍສະເພາະສຳລັບຄົນຮຸ່ນໃໝ່ທີ່ກຳລັງສົນໃຈການດຳເນີນທຸລະກິດເປັນຂອງຕົນເອງ.

ຜູ້ບັນຍາຍ ແລະ ຖ່າຍທອດບົດຮຽນ :

- ທ່ານ **Takashi TSUNEKAWA,** ຊ່ຽວຊານ ຈາກອົງການ **JICA** ແລະ ເປັນທີ່ປືກສາໃນດ້ານການເງິນສຳລັບທຸລະກິດ ຂະໜາດນ້ອຍ ແລະ ການສຳລັບ ສ ປປ ລາວ,
- ມີປະສົບການໃນດ້ານການສ້າງແຜນທຸລະກິດ ແລະ ການເຂົ້າຫາແຫຼ່ງທຶນໃຫ້ແກ່ ທຸລະກິດຂະໜາດນ້ອຍ ແລະ ກາງ ຫຼາຍກວ່າ 10 ປີ.
- ເປັນທີ່ປືກສາໃຫ້ແກ່ຫຼາຍປະເທດ ໂດຍສະເພາະໃນດ້ານວິຊາການໃນການສ້າງຂີດຄວາມສາມາດໃຫ້ແກ່ຄົນຮຸ່ນໃໝ່ໃນການສ້າງທຸລະກິດ.

**ເປົ້າໝາຍຜູ້ເຂົ້າຮ່ວມ :**

- ຜູ້ສືບທອດ ຫຼື ເຄືອຍາດ ຂອງ ເຈົ້າຂອງທຸລະກິດ
- ນັກຮຽນ,ນັກສຶກສາ
- ພະນັກງານໃນບໍລິສັດ ແລະ ອົງກອນ ທີ່ ມີຄວາມສົນໃຈໃນການສ້າງທຸລະກິດ
- ບຸກຄົນທົ່ວໄປທີ່ມີຄວາມສົນໃຈ

ເງື່ອນໄຂຜູ້ເຂົ້າຮ່ວມ:

- ຜູ້ທີ່ສົນໃຈຢາກຮຽນຮູ້ກ່ຽວກັບການສ້າງແຜນທຸລະກິດ ແລະ ຂັ້ນຕອນໃນການສ້າງທຸລະກິດ

ເອກະສານປະກອບ:

- ບົດນຳສະເໜີ ແລະ ເອກະສານທີ່ໃຊ້ໃນການບັນຍາຍ
- ເອກະສານໃນການສ້າງແຜນທຸລະກິດ
- ແບບສອບຖາມສຳລັບການສ້າງທຸລະກິດ

- **ກະລຸນາສົ່ງແບບຟອມສະໝັກ ມາຍັງ ສຄອ ແຫ່ງຊາດລາວ ກ່ອນວັນທີ 13/03/2018, ສອບຖາມຂໍ້ມູນເພີ່ມເຕີມຕິດຕໍ່ :**
- **ນາງ ວິລັກ , ໂທ : 020 29804379, ອີເມວ : vilack_lncci@hotmail.com,**
- **ນາງ ຄອນສະຫວັນ, 020 55261789, ອີເມວ: khonesavanhlncci@gmail.com,**
- **ທ້າວ ຄຳສອນ 020 55946471, ອີເມວ: lnccieba2005@gmail.com, ແຟັກ : 021 452580.**

ດັ່ງນັ້ນ, ຈິ່ງຮຽນເຊີນມາຍັງທ່ານ ເພື່ອ ພິຈາລະນາ ແລະ ຕອບຮັບຕາມຄຳເຊີນດ້ວຍ.

ດ້ວຍຄວາມນັບຖື,

ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ

ເລຂາທິການ

ມານິດໂຕ ພົມໂພທິ

ໝາຍເຫດ :

ການເຂົ້າຮ່ວມສຳມະນາແມ່ນຮັບຈຳນວນຈຳກັດ ແລະ ຈະບໍ່ໄດ້ເສຍຄ່າທຳນຽມເຂົ້າຮ່ວມ

# <u>ໃບສະໝັກເຂົ້າຮ່ວມການສຳມະນາ</u>

**ຈຸດປະກາຍຝັນໃນການເປັນຜູ້ປະກອບກິດຈະການໃຫ້ປະກົດຜົນເປັນຈິງພາຍໃຕ້ຫົວຂໍ້ :**

**ການລິເລີ່ມແນວຄວາມຄິດສ້າງທຸລະກິດ ແລະ ການຂຽນແຜນທຸລະກິດ**

**Let's have a dream as entrepreneur,**

**Topic : To think about business start-up and how to make a business plan,**

ໃນວັນທີ 16/03/2018 ເວລາ 13:00-16:00 ທີ່ ສູນການຄ້າ ລາວ-ໄອເຕັກ (ຕຶກເກົ່າ)

**<u>ພາກທີ I</u>. *ກະລຸນາຕື່ມຂໍ້ມູນລຸ່ມນີ້ ໃຫ້ລະອຽດ. (Please fill Clearly)***

ຊື່ ແລະ ນາມສະກຸນ:………………………………………………………………………………….

Name and Surname :……………………………………………………………………………

ທີ່ຢູ່ປະຈຸບັນ(ບ້ານ, ເມືອງ, ແຂວງ) :……………………………………………………………………….

ມືຖື (Cell Phone) :…………………………, E-mail : ………………………………………………

ມາຈາກພາກສ່ວນ (Organization) :………………………………………………………………..

ອາຍຸ (Age) :……………………………………………………………………………………

ຕຳແໜ່ງ (Position) :……………………………………………………………………………

ທີ່ຢູ່ Address) :………………………………………………………………………………..

ໂທລະສັບ (Telephone) :…………………………., Fax :……………………………………………...

**<u>ພາກທີ II</u>. *ກະລຸນາສົ່ງໃບສະໝັກ ທີ່ :*** ສຄອ ແຫ່ງຊາດລາວ . ຖະໜົນ ໄກສອນພົມວິຫານ, ບ້ານໂພນພະເນົາ, ນະຄອນຫລວງວຽງຈັນ, ສປປ ລາວ, ຕູ້ **ປ.ນ** 4596, ໂທ **:** (856-21) 453312, Fax **:**(85621)452580

**ຕິດຕໍ່ສອບຖາມຂໍ້ມູນເພີ່ມເຕີມ:**

- **ນາງ ວິລັກ , ໂທ : 020 29804379, ອີເມວ :** vilack_lncci@hotmail.com
- **ນາງ ຄອນສະຫວັນ 020 55261789, ອີເມວ:** kit_khone@hotmail.com
- **ທ້າວ ຄຳສອນ 020 55946471, ອີເມວ:** khamsonesili@gmail.com.

<u>ໝາຍເຫດ</u>: ກະລຸນາສົ່ງໃບສະໝັກກ່ອນວັນທີ 14/03/2018